ສຳນັກງານໃຫຍ່

ເລກທີ: 3776 /ທຄຕລ.....2026.....
ນະຄອນຫຼວງວຽງຈັນ, ວັນທີ:..02../..11../..2026

ໜັງສືແຈ້ງເຊີນ

ເຖິງ: ບັນດາບໍລິສັດ ຕົວແທນຈຳໜ່າຍພາຫະນະ ພາຍໃນ ນະຄອນຫຼວງວຽງຈັນ ທີ່ນັບຖື.

ເລື່ອງ: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ພາຫະນະ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາຜູ້ສະໜອງ ຊາບວ່າ ທຄຕລ ມີຄວາມຕ້ອງການພາຫະນະ ຈຳນວນ 01 ຄັນ, ສະນັ້ນ ຈຶ່ງແຈ້ງມາທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນ ດັ່ງມີລາຍການລຸ່ມນີ້:

ລ/ດ	ລາຍລະອຽດ	ຈຳນວນ
1	ລົດໄຟຟ້າ ຍີ່ຫໍ້ TOYOTA ລຸ້ນ BZ5 ສີແດງ.	01 ຄັນ

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍພາຫະນະ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານ ຊອງທີ1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍພາຫະນະ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023-2026, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ) ແລະ ຕ້ອງມີ ສູນບໍລິການ ຫຼັງການຂາຍ.
2. ກຳນົດສົ່ງເອກະສານ, ລາຍລະອຽດສະເປັກລົດ, ການຮັບປະກັນສິນຄ້າ, ໄລຍະເວລາໃນການຈັດສົ່ງ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້ ແລະ ສົ່ງກ່ອນ **ວັນສຸກ, ທີ 20/11/2026 ເວລາ 11:00** ໂດຍການສົ່ງຟາຍ PDF ເຂົ້າ E-mail: procurement@bcel.com.la

❖ **<u>ເອກະສານ ຊອງທີ2:</u> (ປິດຊອງ)**

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນ ວັນພຸດ ທີ **02/12/2026 ເວລາ 13:30** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງ ຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.

2.2 ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ.

2.3 ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ ດ້ວຍໜັງສືຄ້ຳປະກັນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 18/02/2027) ຫຼື ແຊັກທີ່ວີຊ້າແລ້ວ ທີ່ ອອກ ໂດຍ ທຄຕລ ເທົ່ານັ້ນ, ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສື ຄ້ຳປະກັນ ດັ່ງກ່າວ ຄືນ ໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສຳລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນ ຈະສົ່ງຄືນຫຼັງຈາກ ທີ່ຜູ້ສະໜອງ ຈັດສົ່ງລົດໃຫ້ ທຄຕລ ຖືກຕ້ອງຄົບຖ້ວນ.

ຕິດຕໍ່ພົວພັນ: ຂະແໜງສະໜອງວັນຖເຕັກນິກ213200 ຕໍ່ 414

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

2.4 ຖ້າຜູ້ສະໜອງບໍ່ວາງເງິນຄ້ຳປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຍື່ນຊອງໃບສະເໜີລາຄາ.

❖ **<u>ໝາຍເຫດ:</u>**

ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ ແລະ ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

❖ **<u>ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ</u>:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງຂໍຮຽນເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ສາຍຈິດ ສົມມະວົງ

ຕິດຕໍ່ພົວພັນ: ຂະແໜງສະໜອງ ໂທ 213200 ຕໍ່ 414

(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕົ່ມຂໍ້ມູນ ແລະ ເຊັ້ນຍັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ...../ຫຄຕລ, ລົງວັນທີ .....

ລ/ດ	ຜູ້ສະໜອງ	ເງື່ອນໄຂ								ໝາຍເຫດ
		ໃບທະບຽນວິສາຫະກິດ	ໃບຍັ່ງຢືນການເສຍອາກອນ 2023	ໃບອະນຸຍາດດຳເນີນທຸລະກິດ	ໄລຍະເວລາໃນການດຳເນີນທຸລະກິດ	ໃບອະນຸຍາດເປັນຕົວແທນ	ສຸນບໍລິການຫຼັງການຂາຍ	ການຮັບປະກັນສິນຄ້າ	ກຳນົດສົ່ງ (ວັນ)	
1	ບ/ສ.....	(ເລກທີ/ XX.XX.20XX)	(ເລກທີ/ XX.XX.20XX)	(ເລກທີ/ XX.XX.20XX)	.... ປີ	(ໃຫ້ລະບຸ)	☐ ມີ ☐ ບໍ່ມີ	.... ປີ	.....	(ຖ້າມີຂອງແຖມແມ່ນ ໃຫ້ລະບຸເລີຍ ເຊັ່ນ: ປະກັນໄພ, ຕິດຝົມ, ຮອງແບັດເຕີລີ້ ແລະ ອື່ນໆ....)

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະແຈ້ຳຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ.....

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: